**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ກະຊວງການຕ່າງປະເທດ
ຫ້ອງການ

ເລກທີ:...375.../ຫກ
ນະຄອນຫຼວງວຽງຈັນ, ວັນທີ: 04 FEB 2026

# ຫນັງສືແຈ້ງເຊີນປະມູນ

**ເຖິງ:** ບັນດາບໍລິສັດ, ຫ້າງ/ຮ້ານ ແລະ ຜູ້ປະກອບການກ່ຽວກັບການສະໜອງ ເຄື່ອງໃຊ້ຫ້ອງການ
**ເລື່ອງ:** ເຊີນເຂົ້າຮ່ວມແຂ່ງຂັນປະມູນເປີດກວ້າງ ສໍາລັບການສະໜອງເຄື່ອງໃຊ້ຫ້ອງການໃຫ້ແກ່ ກະຊວງການຕ່າງປະເທດ ປະຈໍາປີ 2026.

ຫ້ອງການ ກະຊວງການຕ່າງປະເທດ ຂໍຖືເປັນກຽດຮຽນເຊີນບັນດາບໍລິສັດ, ຫ້າງ/ຮ້ານ ແລະ ຜູ້ປະກອບການກ່ຽວກັບການສະໜອງເຄື່ອງໃຊ້ຫ້ອງການ ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນເພື່ອສະໜອງເຄື່ອງໃຊ້ຫ້ອງການ ໃຫ້ແກ່ ກະຊວງການຕ່າງປະເທດ ປະຈໍາປີ 2026, ເຊິ່ງມີລາຍລະອຽດ ດັ່ງນີ້:

1. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກ້ວາງທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
2. ການປະມູນນີ້ ແມ່ນເປີດກວ້າງໃຫ້ທຸກໆ ບໍລິສັດ, ຫ້າງ/ຮ້ານ ຂອງນິຕິບຸກຄົນພາຍໃນທີ່ດໍາເນີນທຸລະກິດຢູ່ໃນນະຄອນຫຼວງວຽງຈັນ, ມີໃບທະບຽນວິສາຫະກິດ, ມີເລກປະຈໍາຕົວເສຍອາກອນ ແລະ ມີໃບຢັ້ງຢືນການປະຕິບັດພັນທະພາສີອາກອນ ຖືກຕ້ອງຕາມກົດໝາຍ.
3. ບໍລິສັດ, ຫ້າງ/ຮ້ານ ແລະ ຜູ້ປະກອບການກ່ຽວກັບການສະໜອງ ເຄື່ອງໃຊ້ຫ້ອງການ ທີ່ມີຄວາມສົນໃຈສາມາດຕິດຕໍ່ພົວພັນເອົາເອກະສານປະມູນຄົບຊຸດໄດ້ ທີ່ ພະແນກບໍລິຫານ, ຫ້ອງການ ກະຊວງການຕ່າງປະເທດ (ໂທລະສັບ 021 416572, 020 55611534), ເຊິ່ງມີສໍານັກງານຕັ້ງຢູ່ຖະໜົນ 23 ສິງຫາ, ບ້ານໂພນໄຊ, ເມືອງໄຊເຊດຖາ, ນະຄອນຫຼວງວຽງຈັນ ໃນໂມງລັດຖະການ 8:00-11:00 ໂມງ ແລະ 13:00-16:00 ໂມງ, ເລີ່ມຂາຍຊອງປະມູນວັນທີ 12 ກຸມພາ 2026, ລາຄາຊອງປະມູນ 1,000,000 ກີບ (ໜຶ່ງລ້ານກີບ), ຈໍານວນເງິນດັ່ງກ່າວຈະບໍ່ໄດ້ສົ່ງຄືນ, ວິທີການຊໍາລະເງິນຕ້ອງຈ່າຍເປັນເງິນສົດ.
4. ກໍານົດສົ່ງຊອງປະມູນ ຕ້ອງໃຫ້ສົ່ງ ພະແນກບໍລິຫານ, ຫ້ອງການ ກະຊວງການຕ່າງປະເທດ ກ່ອນເວລາ 16:00 ໂມງ ຂອງວັນທີ 24 ກຸມພາ 2026, ຖ້າຊອງປະມູນໃດສົ່ງຊ້າກ່ອນກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງປະມູນ.

5. ກໍານົດເປີດຊອງປະມູນແມ່ນວັນທີ 25 ກຸມພາ 2026 ເວລາ 13:00 ໂມງ ທີ່ ຫ້ອງປະຊຸມຊັ້ນ 3 ຕຶກ B ຂອງ ກະຊວງການຕ່າງປະເທດ, ໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມ ນໍາ.
6. ເອກະສານປະມູນ ຕ້ອງໄດ້ປະກອບໜັງສືຄໍ້າປະກັນການປະມູນດ້ວຍກຽດ ຫລື ໜັງສືຄໍ້າປະກັນການປະມູນຈາກ ທະນາຄານ, ຊຶ່ງມູນຄ່າຂອງການຄໍ້າປະກັນບໍ່ໃຫ້ຫລຸດ 2% (ສ່ວນຮ້ອຍ) ຂອງລາຄາປະມູນ.

ດັ່ງນັ້ນ, ຈຶ່ງເຊີນມາຍັງທ່ານຜູ້ທີ່ມີຄວາມສົນໃຈ ເຂົ້າຮ່ວມປະມູນ ຕາມວັນເວລາດັ່ງກ່າວດ້ວຍ.

**ຫົວໜ້າຫ້ອງການ**

ກະຊວງການຕ່າງປະເທດ
ຫ້ອງການ

ບົວອນທັດ ດວງຈັກ

**ເງື່ອນໄຂບໍລິສັດ ຫຼື ຫ້າງ/ຮ້ານ ທີ່ມີສິດເຂົ້າຊື້ຊອງປະມູນ**

(1) ໃບທະບຽນວິສາຫະກິດທີ່ຖືກຕ້ອງຕາມກົດໝາຍແຫ່ງ ສປປ ລາວ.
(2) ໃບອະນຸຍາດດຳເນີນທຸລະກິດດ້ານການສະໜອງເຄື່ອງໃຊ້ຫ້ອງການ ຫຼື ທຸລະກິດຂະແໜງການກ່ຽວຂ້ອງ ປະຈຳປີ 2025 ຫຼື 2026.
(3) ໃບຢັ້ງຢືນເສຍພັນທະອາກອນ ປີ 2024 ຫຼື 2025 (ສະບັບຫຼ້າສຸດ).
(4) ໃບຢັ້ງຢືນຖານະການເງິນຂອງບໍລິສັດ ສະບັບຫຼ້າສຸດ ຈາກທະນາຄານທີ່ໜ້າເຊື່ອຖື.
(5) ໃບຢັ້ງຢືນຜົນງານທີ່ກ່ຽວຂ້ອງຜ່ານມາ (ປະສົບການການຮ່ວມງານກັບພາກລັດ).
(6) ຮູບພາບສະແດງເຄື່ອງໃນຮ້ານ, ສາງເກັບມ້ຽນເຄື່ອງ.
(7) ຮູບສະແດງສະຖານທີ່ຕັ້ງຂອງຮ້ານ, ໂຄງຮ່າງການຈັດຕັ້ງ ແລະ ຈຳນວນພະນັກງານ.